**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

<u>ສຳນັກງານນາຍົກລັດຖະມົນຕີ</u>  ເລກທີ່ 10 /ນຍ

# ດຳລັດ

## ແຕ່ງຕັ້ງຄະນະກຳມະການສະເພາະກິດຕິດຕາມກວດກາ ການຄຸ້ມຄອງວຽກງານປ່າໄມ້ ຢູ່ເຂດໂຄງການນ້ຳເທີນ 2

- ອີງໃສ່ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ່ 10/ນຍ ລົງວັນທີ່ 4/10/2000 ວ່າດ້ວຍການຄຸ້ມຄອງວຽກງານປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ່ 0855/ຫສນຍ ລົງວັນທີ່19/5/2000 ກ່ຽວກັບການໄປກວດກາສະພາບການຂຸດຄົ້ນໄມ້ຢູ່ຂອບເຂດໂຄງການນ້ຳເທີນ 2.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ່ 193/ນຍ ລົງວັນທີ່ 4/1/2001 ວ່າດ້ວຍການສ້າງຕັ້ງເຂດເຊື່ອມຕໍ່, ເນື້ອທີ່ປ່າໄມ້ ຈະຈັດສັນເປັນບ້ານໃຫມ່ໃຫ້ປະຊາຊົນໄປຢູ່, ຂອບເຂດອ່າງນ້ຳຈະຖ້ວມ, ປ່າສະຫງວນນາກາຍ-ນ້ຳເທີນ.
- ອີງຕາມການສະເຫນີ ຂອງ ຄະນະກຳມະການຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ.

## ນາຍົກລັດຖະມົນຕີ ອອກດຳລັດ

**<u>ມາດຕາ 01</u>** : ແຕ່ງຕັ້ງຄະນະກຳມະການສະເພາະກິດ ຕິດຕາມກວດກາການຄຸ້ມຄອງວຽກງານປ່າໄມ້ຢູ່ເຂດໂຄງການນ້ຳເທີນ 2 ຊຶ່ງປະກອບດ້ວຍ :

1. ທ່ານ ເຈົ້າແຂວງຄຳມ່ວນ — ເປັນປະທານ
2. ທ່ານ ຮອງເຈົ້າແຂວງບໍລິຄຳໄຊ — ເປັນຮອງປະທານ
3. ທ່ານ ຫົວຫນ້າກົມປ່າໄມ້ — ເປັນຮອງປະທານ, ທັງເປັນຜູ້ປະຈຳການ
4. ທ່ານ ເຈົ້າເມືອງນາກາຍ — ເປັນກຳມະການ

5. ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງຄຳມ່ວນ ເປັນກຳມະການ
6. ທ່ານ ເຈົ້າເມືອງຄຳເກີດ ເປັນກຳມະການ
7. ທ່ານ ຜູ້ຕາງໜ້າໂຄງການນ້ຳເທີນ 2 ເປັນກຳມະການ
8. ທ່ານ ຜູ້ຕາງໜ້າກຸ່ມຜູ້ພັດທະນາໂຄງການນ້ຳເທີນ 2 ເປັນກຳມະການ

<u>ມາດຕາ 02</u> : ຄະນະກຳມະການສະເພາະກິດດັ່ງກ່າວມີສິດ ແລະ ໜ້າທີ່ :

- ຕິດຕາມກວດກາສະພາບການຈັດຕັ້ງປະຕິບັດບັນດາດຳລັດ ແລະ ຄຳສັ່ງກ່ຽວກັບການຄຸ້ມຄອງວຽກງານປ່າໄມ້, ການຂຸດຄົ້ນ ແລະ ການດຳເນີນທຸລະກິດໄມ້ ໃນເຂດໂຄງການນ້ຳເທີນ 2 ຢ່າງເຂັ້ມງວດ.
- ກຳນົດວາງມາດຕະການທີ່ເໝາະສົມ ເພື່ອຈັດຕັ້ງປະຕິບັດລະບຽບ ແລະ ກົດໝາຍກ່ຽວກັບປ່າໄມ້.
- ປະຕິບັດບັນດາມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ ແລະ ເດັດຂາດ.
- ລາຍງານສະພາບການເຄື່ອນໄຫວດັ່ງກ່າວໃຫ້ລັດຖະບານຊາບຢ່າງທັນການ ແລະ ເປັນປົກກະຕິ.

<u>ມາດຕາ 03</u> : ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການດຳເນີນການຕິດຕາມກວດກາປະຈຳປີ ກ່ຽວກັບສະພາບການເຄື່ອນໄຫວຄຸ້ມຄອງວຽກງານປ່າໄມ້ ຢູ່ໃນເຂດໂຄງການນ້ຳເທີນ 2 ຮ່ວມກັນ ລະຫວ່າງ ລັດຖະບານ ສປປ ລາວ, ທະນາຄານໂລກ, ກຸ່ມຜູ້ພັດທະນາໂຄງການນ້ຳເທີນ 2 , ກຸ່ມທີ່ປຶກສາສາກົນຂອງທະນາຄານໂລກ ສຳລັບໂຄງການນ້ຳເທີນ 2 (IAG ) ແລະ ຄະນະຊ່ຽວຊານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ (POE).

<u>ມາດຕາ 04</u> : ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງພັກ, ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນກ່ຽວຂ້ອງ, ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດນີ້ຢ່າງເຂັ້ມງວດ.

<u>ມາດຕາ 05</u> : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ,ວັນທີ 16-1-2001

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

**ສີສະຫວາດ ແກ້ວບຸນພັນ**